# ສິລະປະວັນນະຄະດີສະໜັກຫຼິ້ນກອງ"ກ2"



ສິລະປະວັນນະຄະດີສະໜັກຫຼິ້ນກອງ"ກ**2**": ເນື່ອງໃນໂອກາດສະ ເຫຼີມສະຫຼອງວັນຊາດທີ **2**ທັນວາ ໄດ້ສະແດງຮັບໃຊ້ພະນັກງານ-ນັກຮົບ ແລະ ພໍ່ແມ່ປະຊາຊົນອ້ອມຂ້າງ ເປັນເວລາ 2 ວັນ ເຊິ່ງລາຍການທີ່ນາມາສະແດງມີ **6** ລາຍການພ້ອມນີ້ກໍ່ ມີສິລະປະແລກປ່ຽນມາສະແດງຮ່ວມໃນນັ້ນສິລະປະທະຫານແຂວງໄຊຍະບູລີມີ **10** ລາຍການ ແລະ ໂຮງຮຽນມັດທະຍົມພັດທະນາ **23** ລາຍການ ເຊິ່ງແຕ່ລະລາຍການສະ ແດງນັ້ນ ລ້ວນແຕ່ສ່ອງແສງໃຫ້ເຫັນເຖິງການເຕີບໃຫຍ່ຂະຫຍາຍຕົວຂອງຊາດລາວຕະຫຼອດ **40** ປີຜ່ານມາ, ການນໍາພາຂອງພັກໃນພາລະກິດປົດປ່ອຍປະເທດຊາດ ເຊິ່ງໄດ້ສ້າງຄວາມເບີກບານມ່ວນຊື່ນແກ່ຜູ້ຊົມເປັນຢ່າງດີ.